**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ສະຖາບັນໂຍທາທິການ ແລະ ຂົນສົ່ງ
ຄະນະກຳມະການຈັດຊື້-ຈັດຈ້າງ

ເລກທີ 896 /ສຍຂ
ນະຄອນຫຼວງວຽງຈັນ, ວັນທີ ໐໙ ມິຖຸນາ ໒໐໒6

# ໜັງສືແຈ້ງເຊີນປະມູນ

1. ສະຖາບັນໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຍື່ນຊອງປະມູນການຈັດຊື້ ປັບປຸງກໍ່ສ້າງກຳແພງຮົ້ວ ແລະ ປັບປຸງກໍ່ສ້າງບ່ອນຈອດລົດ ໂດຍຍໍາໃຊ້ງົບປະມານປະຈໍາປີ 2026-2027 (ພາກ 62) ການຈັດຕັ້ງປະຕິບັດໃຫ້ສໍາເລັດພາຍໃນ 05 ເດືອນ ພາຍຫຼັງເຊັນສັນຍາແລ້ວ;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນດໍາລັດ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງ ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ທີ່ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນຄົບຊຸດ ແລະ ສາມາດຊື້ໄດ້ ທີ່ ສະຖາບັນໂຍທາທິການ ແລະ ຂົນສົ່ງ ຖະໜົນທ່າເດື່ອ ບ້ານດົງໂພສີ ເມືອງຫາດຊາຍຟອງ, ຕິດຕໍ່ເບີໂທ 020 56535516, ເລີ່ມຕັ້ງແຕ່ວັນທີ 09 ມີນາ 2026 ເປັນຕົ້ນໄປ, ໃນລາຄາ ຊຸດລະ 1.000.000 ກີບ (ໜຶ່ງລ້ານກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຈ່າຍເງິນຈະຕ້ອງຈ່າຍເປັນເງິນສົດ ຫຼື ເຊັກເງິນສົດ;
4. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມສະຖາບັນໂຍທາທິການ ແລະ ຂົນສົ່ງ ເວລາ 9:00 ໂມງ ຂອງວັນທີ 13 ກໍລະກົດ 2026 ແລະ ຕ້ອງສົ່ງຊອງປະມູນກ່ອນເວລາ 9:30 ໂມງ ຂອງວັນຈັນ ແລະ ຊອງປະມູນເປີດກວ້າງທຸກໆຊອງ ຈະໄດ້ເປີດໃນເວລາ 09:35 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງບໍລິສັດ ທີ່ສົນໃຈເຂົ້າຮ່ວມປະມູນ;
5. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນໃນການປະມູນເຊັ່ນ: ໜັງສືຄໍ້າປະກັນການປະມູນຈາກທະນາຄານເຊິ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

**ຮອງຫົວໜ້າສະຖາບັນໂຍທາທິການ ແລະ ຂົນສົ່ງ**
**ຫົວໜ້າຄະນະກໍາມະການຈັດຊື້-ຈັດຈ້າງ**

ບຸນທະວີ ວິໄລສອນ